Empowered lives.
Resilient nations.

# <u>ບົດອອກຂ່າວ</u>

## ພິທີເປີດງານວາງສະແດງ ຜົນສຳເລັດຂອງວຽກງານການຮ່ວມມືເພື່ອການພັດທະນາ ແລະ ຮູບພາບ ກ່ຽວກັບເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ເພື່ອຕ້ອນຮັບ ກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ່ 11

### ທີ່ ຫໍປະຊຸມແຫ່ງຊາດ, ວັນທີ 18-19 ພະຈິກ 2013

ເພື່ອເປັນການຕ້ອນຮັບ ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 11 ປະຈຳປີ 2013, ໃນວັນທີ 18 ພະຈິກ 2013, ເວລາ 10:00 ໂມງ, ຢູ່ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ໄດ້ມີພິທີເປີດງານວາງສະແດງຜົນສຳເລັດຂອງວຽກງານການຮ່ວມມືເພື່ອການພັດທະນາ ແລະ ຮູບພາບກ່ຽວກັບເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ໂດຍໃຫ້ກຽດຕັດແຖບຜ້າເປີດພິທີຢ່າງເປັນທາງການ ຂອງ ພະນະທ່ານ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງ ການຕ່າງປະເທດ ຮ່ວມກັບ ທ່ານ ຮາວລຽງ ຊູ, ຜູ້ຊ່ວຍເລຂາທິການໃຫຍ່ ຂອງອົງການສະຫະປະຊາຊາດ, ຜູ້ຊ່ວຍຜູ້ອຳນວຍການໃຫຍ່ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ທັງເປັນເອກອະທິບໍດີຮັບຜິດຊອບພາກພື້ນອາຊີ-ປາຊີຟິກ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ພະນະທ່ານ ສົມດີ ດວງດີ, ລັດຖະມົນຕີວ່າການກະຊວງ ແຜນການ ແລະ ການລົງທຶນ.

ຈຸດປະສົງຂອງງານວາງສະແດງດັ່ງກ່າວ ແມ່ນເພື່ອນຳສະເໜີໃຫ້ມວນຊົນ ແລະ ບັນດາຄະນະຜູ້ແທນຂອງກອງປະຊຸມໂຕະມົນລະດັບສູງ ທັງພາຍໃນ ແລະ ຕ່າງປະເທດ ເຫັນໄດ້ເຖິງປະສິດທິຜົນ ຂອງການຊ່ວຍເຫຼືອ ແລະ ການຮ່ວມມືເພື່ອການພັດທະນາ ໂດຍຜ່ານການຈັດຕັ້ງປະຕິບັດຂອງບັນດາໜ່ວຍງານຂະແໜງການ (SWGs) ເພື່ອບັນລຸເປົ້າໝາຍ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ໃນປີ 2015 ກໍ່ຄືການນຳພາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ ໃນປີ 2020.

ງານວາງສະແດງຄັ້ງນີ້ ໄດ້ມີຜູ້ເຂົ້າຮ່ວມຈາກທັງພາຍໃນ ແລະ ຕ່າງປະເທດ ຈຳນວນ ປະມານ 150 ທ່ານ ຈາກສະຖານທູດ, ອົງການຈັດຕັ້ງສາກົນ, ບັນດາກະຊວງຂະແໜງການກ່ຽວຂ້ອງ ຕະຫຼອດຮອດ ນັກຮຽນ-ນັກສຶກສາ ຈາກສະຖາບັນຕ່າງໆ ອ້ອມຂ້າງນະຄອນຫຼວງວຽງຈັນ ເຂົ້າຮ່ວມ. ພາຍໃນງານ ໄດ້ມີການວາງສະແດງຜົນງານຂອງ 10 ໜ່ວຍງານຂະແໜງການ (SWGs) ເຊັ່ນ: ໜ່ວຍງານຂະແໜງການສາທາລະນະສຸກ, ໜ່ວຍງານຂະແໜງການສຶກສາ, ໜ່ວຍງານຂະແໜງການພື້ນຖານໂຄງລ່າງ, ໜ່ວຍງານຂະແໜງການຄວບຄຸມຢາເສດຕິດ, ໜ່ວຍງານຂະແໜງການເກັບກູ້ລະເບີດຕົກຄ້າງບໍ່ທັນແຕກ, ໜ່ວຍງານເສດຖະກິດມະຫາພາກ, ໜ່ວຍງານຂະແໜງການກະສິກຳ ແລະ ພັດທະນາຊົນນະບົດ, ໜ່ວຍງານຂະແໜງການປົກຄອງ, ໜ່ວຍງານຂະແໜງການການຄ້າ ແລະ ພາກທຸລະກິດ, ແລະ ໜ່ວຍງານຂະແໜງການ

ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ນອກຈາກນີ້ ຍັງມີຫ້ອງວາງສະແດງຂອງ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ຫ້ອງວາງສະແດງຂອງກອງເລຂາຂະບວນການໂຕະມົນ ຂອງກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ, ຊຶ່ງໃນນີ້ໄດ້ມີການເປີດການນຳໃຊ້ລະບົບຖານຂໍ້ມູນ ການຊ່ວຍເຫລືອທາງການເພື່ອການພັດທະນາຢ່າງເປັນທາງການ (AMP-Public Portal); ນອກນີ້, ຍັງມີການປະກອບສ່ວນຂອງ ພາກທຸລະກິດ ເປັນຕົ້ນແມ່ນ ບໍລິສັດຝ້າຍລາວ, ສະມາຄົມໄໝລາວ, ສະມາຄົມຫັດຖະກຳ ແລະ ບໍລິສັດກາເຟ ສິນຸກ.

ເພື່ອເຮັດໃຫ້ງານວາງສະແດງຄັ້ງນີ້ ມີຄວາມຫລາກຫລາຍ, ສະນັ້ນ, ຈຶ່ງໄດ້ມີການມອບລາງວັນ ໃຫ້ແກ່ຜູ້ຊະນະເລີດໃນການປະກວດຮູບພາບ ກ່ຽວກັບເປົ້າໝາຍສະຫດສະຫວັດດ້ານການພັດທະນາ ຊຶ່ງຈຸດປະສົງຂອງການປະກວດຮູບພາບດັ່ງກ່າວ ແມ່ນເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ການພັດທະນາ ຢູ່ ສປປ ລາວ.

ສຳລັບການເຂົ້າຊົມງານວາງສະແດງ ໄດ້ເປີດກ້ວາງໃຫ້ມວນຊົນທົ່ວໄປເຂົ້າຊົມ ໃນວັນທີ 18 ພະຈິກ 2013 ພາຍຫຼັງພິທີເປີດຢ່າງເປັນທາງການ ເຊິ່ງໄດ້ເຊື້ອເຊີນ ສະຖາບັນການສຶກສາ ເຊັ່ນ ຄະນະເສດຖະສາດ ແລະ ຄະນະສິ່ງແວດລ້ອມ, ມາຫາວິທະຍາໄລແຫ່ງຊາດ, ຄະນະພົວພັນຕ່າງປະເທດ, ໂຮງຮຽນເຕັກນິກລາວ-ເຢຍລະມັນ, ໂຮງຮຽນວິຊາຊີບລາວ-ເກົາຫຼີ, ສຳລັບວັນທີ 19 ພະຈິກ 2013 ເປັນວັນສຸດທ້າຍຂອງງານວາງສະແດງນັ້ນ, ແມ່ນເປີດໃຫ້ສະເພາະແຕ່ບັນດາຄະນະຜູ້ແທນ ທີ່ເຂົ້າຮ່ວມກອງປະຊຸມ ເຂົ້າຊົມເທົ່ານັ້ນ.

-ຈົບ-


**<u>ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:</u>**

ທ່ານ ສີສົມພອນ ພັດດາວເຮືອງ, ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ. ໂທ: 020-2222-1991

Email: rtpsecretariat@gmail.com or sysomphorn.dic@gmail.com